ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0435

ກະຊວງສຶກສາທິການ ແລະ ກິລາ

ກົມແຜນການ                                                    ເລກທີ        /ຜກ

ນະຄອນຫຼວງວຽງຈັນ, ວັນທີ      ກຸມພາ 2020

ໜັງສືລາຍງານ

ຮຽນ: ທ່ານລັດຖະມົນຕີກະຊວງສຶກສາທິການແລະກິລາ ທີ່ນັບຖືຢ່າງສູງ

ເລື່ອງ: ລາຍງານການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນສົກປີ 2019 - 2020 ແລະ ການກະກຽມສ້າງແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນສົກປີ 2020-2021.

3/3/2020

ມ.ແສງເດືອນ ຫຼ້າຈັນທະບູນ

- ອີງຕາມ ແຈ້ງການແນະນຳຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ກ່ຽວກັບການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກຮຽນ 2019-2020, ສະບັບເລກທີ 1092/ສສກ, ລົງວັນທີ 29 ກໍລະກົດ 2019.
- ອີງຕາມ ແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກປີ 2019-2020, ສະບັບເລກທີ 1105/ສສກ ລົງວັນທີ 30 ກໍລະກົດ 2019.

ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບກ່ຽວກັບການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກປີຮຽນ 2019-2020 ຂອງບັນດາແຂວງ, ສະຖາບັນການສຶກສາ, ກະຊວງ ແລະ ອົງການທຽບເທົ່າກະຊວງ ແລະ ການກະກຽມສ້າງແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນ ສຳລັບສົກປີ 2020-2021 ໂດຍສັງເຂບດັ່ງນີ້:

## I. ການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກປີ2019-2020

ໃນສົກປີຮຽນ 2019-2020 ຕົວເລກທີ່ກະຊວງສຶກສາທິການ ແລະ ກິລາອະນຸມັດທັງໝົດ 52.665 ຄົນ. ການສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນ ສົກປີ2019-2020 ຂອງພາກສ່ວນກ່ຽວຂ້ອງຕ່າງໆປະຕິບັດໄດ້ຕົວຈິງທັງໝົດ 35.542 ຄົນ ເມື່ອທຽບໃສ່ແຜນອະນຸມັດແມ່ນປະຕິບັດໄດ້ 69% (ມະຫາວິທະຍາໄລ 04 ແຫ່ງປະຕິບັດໄດ້ 77%, ສະຖາບັນສ້າງຄູ 82%, ສະຖາບັນອາຊີວະສຶກສາ 68%, ບັນດາກະຊວງຕ່າງໆທີ່ມີໂຮງຮຽນຂຶ້ນກັບ 53% ແລະ ສະຖາບັນພາກເອກະຊົນ 02 ແຫ່ງ ປະຕິບັດສະເລ່ຍໄດ້ 99.9%) ແລະ ຕົວເລກຈຳນວນໜຶ່ງຍັງບໍ່ໄດ້ຮັບລາຍງານ (ກະຊວງການເງິນ) ຈຶ່ງເຮັດໃຫ້ຕົວເລກການຈັດຕັ້ງປະຕິບັດລຸດແຜນອະນຸມັດຫຼາຍ.

ໂດຍລວມແລ້ວການຈັດຕັ້ງປະຕິບັດຕົວຈິງໃນການຮັບນັກຮຽນ-ພະນັກງານເຂົ້າຮຽນຂອງສະຖາບັນການສຶກສາ ແມ່ນຢູ່ໃນແຜນຕົວເລກລວມ ທີ່ກະຊວງສຶກສາທິການ ແລະ ກິລາ ອະນຸມັດໃຫ້ພ້ອມທັງປະຕິບັດຕາມມາດຕະຖານ ແລະ ເງື່ອນໄຂທີ່ກຳນົດເປັນຢ່າງດີ, ແຕ່ຍັງມີການຮັບນັກຮຽນເກີນໃນບາງວິຊາທີ່ເປັນຄ່ານິຍົມຂອງສັງຄົມ.

(ເອກະສານຄັດຕິດ ເບີ 01: ສະແດງໃຫ້ເຫັນເຖິງຕົວເລກການຈັດຕັ້ງປະຕິບັດແຜນແບ່ງປັນສົກປີ 2019-2020).

1 ສະພາບລວມຂອງການຈັດຕັ້ງປະຕິບັດ

ຈາກການສະຫຼຸບລາຍງານຂອງພາກສ່ວນກ່ຽວຂ້ອງ ແລະ ການລົງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດການແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກປີ 2019-2020 ຂອງບັນດາແຂວງ, ສະຖາບັນການສຶກສາ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກປີ 2019-2020 ນີ້ເຫັນວ່າ ມີທັງຈຸດດີ ແລະ ຂໍ້ສະດວກຫຼາຍດ້ານ, ແຕ່ກໍ່ຍັງມີບັນຫາ ແລະ ສິ່ງທ້າທາຍໃນບາງດ້ານທີ່ຈະໄດ້ຖອດຖອນບົດຮຽນ ແລະ ນຳສະເໜີຂຶ້ນເທິງພິຈາລະນາປັບປຸງໃຫ້ດີຍິ່ງຂຶ້ນ.

1.1 ຈຸດດີ ແລະ ຂໍ້ສະດວກ

ການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກປີ2019-2020 ມີຈຸດດີຄື:

- ມີແຈ້ງການແນະນຳຂອງກະຊວງສຶກສາທິການ ແລະ ກິລາເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນຕໍ່ພາຍໃນປະເທດສຳລັບສົກປີຮຽນ 2019-2020, ສະບັບເລກທີ 1092/ສສກ, ລົງວັນທີ 29 ກໍລະກົດ 2019;
- ແຕ່ລະພາກສ່ວນມີການຕົກລົງແຕ່ງຕັ້ງຄະນະກຳມະການຄັດເລືອກ ແລະ ແບ່ງປັນສັບຊ້ອນນັກຮຽນ-ພະນັກງານພ້ອມທັງມີການແບ່ງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນມີຄວາມຊັດເຈນ ໂດຍສະເພາະຂັ້ນແຂວງ ມີຂໍ້ຕົກລົງຂອງທ່ານເຈົ້າແຂວງແຕ່ງຕັ້ງຄະນະຮັບຜິດຊອບ ແລະ ກຳມະການພາກສ່ວນຕ່າງໆ ແລະ ໄດ້ຮັບການຊຸກຍູ້ຕິດຕາມຢ່າງໃກ້ຊິດຈາກຄະນະນຳ ເຮັດໃຫ້ການແບ່ງປັນສັບຊ້ອນເປັນໄປຕາມມາດຖານ, ເງື່ອນໄຂ ແລະ ເວລາທີ່ກຳນົດ;
- ຫຼາຍແຂວງໄດ້ມີການແບ່ງໜ້າທີ່ຄວາມຮັບຜິດຊອບ ໃຫ້ແຕ່ລະອະນຸກຳມະການສັບຊ້ອນ ຄົ້ນຄ້ວາຄຳຮ້ອງ, ຄຳສະເໜີຈາກນັກຮຽນ, ນັກສຶກສາ ແລະ ພໍ່ແມ່ຜູ້ປົກຄອງເພື່ອໃຫ້ຖືກຕ້ອງຕາມມາດຖານເງື່ອນໄຂທີ່ໄດ້ກຳນົດໄວ້ ແລະ ການສັບຊ້ອນນັກຮຽນແມ່ນຈັດລຽງບຸລິມະສິດຕາມອັນດັບທີ່ເສັງໄດ້, ແບ່ງປັນໃຫ້ແຕ່ລະເມືອງ ແລະ ເຂດຫ່າງໄກສອກຫຼີກ.
- ບັນດາກະຊວງ, ອົງການທຽບເທົ່າກະຊວງທີ່ໄດ້ຮັບທຶນແບ່ງປັນໃຫ້ພະນັກງານຮຽນຕໍ່ຍົກລະດັບ ກໍ່ໄດ້ປະຕິບັດຕາມໂຕເລກ ທີ່ກະຊວງສຶກສາທິການ ແລະ ກິລາ ແບ່ງປັນໃຫ້ໄດ້ເປັນຢ່າງດີ.

1.2 ບັນຫາ ແລະ ສິ່ງທ້າທາຍ

ບັນຫາ ແລະ ສິ່ງທ້າທາຍລວມ ຂອງການຈັດຕັ້ງປະຕິບັດຕົວຈິງຍັງມີບາງພາກສ່ວນທີ່ຍັງບໍ່ທັນເຂົ້າໃຈດີເທົ່າທີ່ຄວນໃນການຈັດຕັ້ງປະຕິບັດນະໂຍບາຍການແບ່ງປັນສັບຊ້ອນ ຊຶ່ງເຮັດໃຫ້ການຈັດຕັ້ງປະຕິບັດບໍ່ມີຄວາມເປັນເອກະພາບກັນ. ຍັງມີປະກົດການດຸນຕົວເລກຮັບນັກຮຽນເກີນໃນຂົງເຂດວິຊາທີ່ໄດ້ຮັບຄວາມນິຍົມຂອງສັງຄົມ ເຊັ່ນ: ສາຂາວິຊາກົນຈັກໜັກ, ໄຟຟ້າ, ຄອມພິວເຕີ ແລະ ບໍລິຫານທຸລະກິດ. ແຕ່ໃນຂົງເຂດວິຊາທີ່ລັດຖະບານມີນະໂຍບາຍສົ່ງເສີມໂດຍສະເພາະໃນສາຍອາຊີວະສຶກສາ ເພື່ອຕອບສະໜອງໃຫ້ແກ່ຕະຫຼາດແຮງງານທີ່ມີຄວາມຕ້ອງການຫຼາຍ ກໍ່ຍັງບໍ່ທັນປະຕິບັດໄດ້ຕາມແຜນທີ່ວາງໄວ້ເທົ່າທີ່ຄວນ ເຊັ່ນ: ຊ່າງໄມ້, ຊ່າງກໍ່, ປູກຝັງ ແລະ ລ້ຽງສັດ. ການແບ່ງປັນຂອງກະຊວງສຶກສາທິການ ແລະ ກິລາ ຫຼາຍວິຊາຮຽນຍັງບໍ່ທັນສອດຄ່ອງກັບຄວາມຕ້ອງການຂອງແຂວງ/ນະຄອນຫຼວງ. ຂາດການປະສານງານລະຫວ່າງພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດແຜນດັ່ງກ່າວ ໂດຍສະເພາະຂາດການນຳສົ່ງນັກຮຽນຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ນອກນັ້ນ, ມະຫາວິທະຍາໄລ, ສະຖາບັນສ້າງຄູ, ສະຖາບັນ

ອາຊີວະສຶກສາ ແລະ ສະຖາບັນທີ່ຂຶ້ນກັບກະຊວງຕ່າງໆບັນດາແຂວງ ຍັງມີສະພາບບັນຫາທີ່ເກີດຂຶ້ນ ສະເພາະດ້ານ ທີ່ສາມາດສັງລວມໄດ້ ດັ່ງນີ້:

+ <u>ມະຫາວິທະຍາໄລ ແລະ ສະຖາບັນສ້າງຄູ</u>

- ການປະຊາສຳພັນ ແລະ ການນິເທດກ່ຽວຂະແໜງວິຊາຮຽນຕ່າງໆ ບໍ່ທັນທົ່ວເຖິງ ເຊິ່ງມັນສະແດງອອກ ມີບາງຄະນະວິຊາ ມີຜູ້ສະໝັກຮຽນໜ້ອຍ;
- ນັກສຶກສາທີ່ສອບເສັງໄດ້ (ຈ່າຍຄ່າຮຽນ) ບໍ່ມາລົງທະບຽນຮຽນຕາມວັນເວລາທີ່ກຳນົດ ແລະ ສ່ວນໜຶ່ງກໍ່ບໍ່ມາລົງທະບຽນເລີຍ ຍ້ອນເສັງເຂົ້າຮຽນໄດ້ໃນສະຖາບັນອື່ນຕາມຄວາມຕ້ອງການເຊັ່ນ: ມະຫາວິທະຍາໄລວິທະຍາສາດສຸຂະພາບ, ສະຖາບັນການເງິນ-ການທະນາຄານ ແລະ ຈຳນວນໜຶ່ງໄປຮຽນຕ່າງປະເທດດ້ວຍທຶນຕົນເອງ, ຊຶ່ງເຮັດໃຫ້ຕົວເລກນັກສຶກສາຈ່າຍຄ່າຮຽນຫຼຸດແຜນຮັບ. ພ້ອມນັ້ນບາງຄົນເຖິງແມ່ນໄດ້ລົງທະບຽນແລ້ວຊໍ້າພັດຍ້າຍໄປຮຽນໃນຖານະເປັນນັກຮຽນມາໃນແຜນເພາະລາຍຊື່ໃນແຜນອອກຊ້າ;
- ນັກສຶກສາໃນແຜນຈຳນວນໜຶ່ງທີ່ບໍ່ມາລົງທະບຽນຮຽນຕາມທີ່ໄດ້ສັບຊ້ອນເນື່ອງຈາກວ່າບໍ່ມັກໃນວິຊາທີ່ຖືກ ສັບຊ້ອນດັ່ງກ່າວ;
- ນັກຮຽນທີ່ຮຽນຈົບ ມ7 ມາເສັງເຂົ້າຮຽນຢູ່ວິທະຍາໄລຄູຫຼຸດລົງຫຼາຍທຽບໃສ່ປີຜ່ານມາ ເນື່ອງມາຈາກຕົວເລກລັດຖະກອນຄູໜ້ອຍລົງ ຈຶ່ງເປັນສາເຫດໃຫ້ນັກຮຽນບໍ່ຢາກມາຮຽນຄູ ແລະ ປະລະການຮຽນໄປຮຽນສາຂາວິຊາອື່ນໆ;
- ໃນບາງທ້ອງຖິ່ນ ເກີດສະພາບອາກາດບໍ່ເອື້ອອຳນວຍ, ເກີດອຸທົກກະໄພ ແລະ ການເດີນທາງມີຄວາມລຳບາກເຮັດໃຫ້ນັກສອບເສັງບາງແຂວງ ໂດຍສະເພາະນັກສອບເສັງຈາກເຂດຫ່າງໄກສອກຫຼີກບໍ່ສາມາດເຂົ້າຮ່ວມສອບເສັງໄດ້.

+ <u>ສະຖາບັນອາຊີວະສຶກສາ</u>

- ຍັງມີບາງສະຖານອາຊີວະສຶກສາຮັບເອົານັກຮຽນ-ນັກສຶກສາໃນສາຂາວິຊາທີ່ເສຍຄ່າຮຽນຫຼາຍເກີນຕົວເລກແຜນທີ່ອະນຸມັດໃຫ້ ເຊິ່ງຕົວເລກເກີນດັ່ງກ່າວອາດສົ່ງຜົນກະທົບເຖິງຄຸນະພາບການຮຽນ-ການສອນ;
- ນັກຮຽນ-ນັກສຶກສາຈຳນວນຫຼາຍຍັງຕ້ອງການສຶກສາ, ສອບເສັງ ແລະ ສຳພາດເຂົ້າຮຽນໃນສາຂາວິຊາຮຽນທີ່ຕົນເອງຕ້ອງການຮຽນເທົ່ານັ້ນ ຍັງບໍ່ທັນຄຳນຶງເຖິງສາຂາວິຊາທີ່ຮຽນຈົບໄປແລ້ວສາມາດມີວຽກເຮັດງານທຳ ແລະ ປະກອບອາຊີບໄດ້;
- ສະຖານອາຊີວະສຶກສາບາງແຫ່ງຍັງບໍ່ທັນປະສານສົມທົບກັບພະແນກສຶກສາທິການ ແລະ ກິລາຢ່າງໃກ້ຊິດໃນການແບ່ງປັນຄັດເລືອກ ແລະ ຈັດສັນຕົວເລກທຶນແບ່ງປັນເບ້ຍລ້ຽງ ໂດຍສະເພາະການຄັດເລືອກນັກຮຽນເຂົ້າຮຽນລະດັບ 9+3 ມີຄວາມຊັກຊ້າ, ບໍ່ໄປເຖິງກຸ່ມເປົ້າໝາຍ ແລະ ບໍ່ໄປຕາມກຳນົດແຈ້ງການຂອງກະຊວງສຶກສາທິການ ແລະ ກິລາວາງອອກ ຈຶ່ງເຮັດໃຫ້ນັກຮຽນ-ນັກສຶກສາ ບໍ່ໄດ້ຕາມລະດັບຄາດໝາຍ;
- ການຂຶ້ນແຜນຮັບນັກຮຽນຂອງວິທະຍາໄລອາຊີວະສຶກສາທີ່ຮັບໃຊ້ຫຼາຍແຂວງ, ຫຼາຍກ່ວາ 95% ຂອງແຜນຮັບນັກຮຽນແມ່ນຕົວເລກເສຍຄ່າຮຽນ ສ່ວນທີ່ເຫຼືອແມ່ນສອບເສັງບໍ່ໄດ້ຈ່າຍຄ່າຮຽນ;
- ການໂຄສະນາເຜີຍແຜ່ແນະນຳວິຊາຊີບໃຫ້ແກ່ນັກຮຽນ, ຜູ້ປົກຄອງຍັງບໍ່ເຖິງເຂດຫ່າງໄກ ແລະ ບັນດາຕົວເມືອງທຸກຍາກ.

+ພະແນກສຶກສາທິການ ແລະ ກິລາແຂວງ

- ຄະນະຮັບຜິດຊອບສັບຊ້ອນຂັ້ນເມືອງ ບາງເມືອງຍັງບໍ່ທັນປະຕິບັດຕາມແຈ້ງການ ຂອງພະແນກສຶກສາທິການ ແລະ ກິລາແຂວງ, ເປັນຕົ້ນແມ່ນດ້ານໄລຍະເວລາ, ການສົ່ງລາຍຊື່ນັກຮຽນທີ່ຖືກສັບຊ້ອນຊັກຊ້າ ແລະ ຍັງມີການປ່ຽນແທນຜູ້ຮຽນ;
- ນັກຮຽນທີ່ຖືກສັບຊ້ອນແລ້ວຈຳນວນໜຶ່ງ ບໍ່ໄປຕາມການສັບຊ້ອນຈຶ່ງມີການປ່ຽນແທນເຮັດໃຫ້ພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ, ມີນັກຮຽນຈຳນວນໜຶ່ງເອົາໃບນຳສົ່ງໄປສະເໜີຕົວຢູ່ສະຖາບັນການສຶກສາທີ່ຕົນຮຽນແລ້ວ ແຕ່ຮອດເວລາຮຽນພັດບໍ່ໄປຮຽນເຮັດໃຫ້ເສຍຕົວເລກແບ່ງປັນຂອງພະແນກສຶກສາທິການ ແລະ ກິລາແຂວງ;
- ມີພໍ່ແມ່ຜູ້ປົກຄອງນັກຮຽນຈຳນວນໜຶ່ງຢາກໃຫ້ລູກໄປຮຽນຕາມຄວາມມັກຂອງພໍ່ແມ່ ໂດຍບໍ່ຄຳນຶງເຖິງຄວາມຮັບຮູ້, ຄວາມສາມາດຂອງລູກ ຈຶ່ງມາຮ້ອງຂໍນຳຄະນະກຳມະການສັບຊ້ອນໃຫ້ປ່ຽນຕາມໃຈຕົນເອງມັກ;
- ຕົວເລກສັບຊ້ອນນັກຮຽນແມ່ນມີໜ້ອຍຖ້າທຽບໃສ່ຈຳນວນນັກຮຽນທົ່ວແຂວງເຮັດໃຫ້ການສັບຊ້ອນພົບຄວາມຫຍຸ້ງຍາກ, ການແບ່ງປັນບໍ່ທົ່ວເຖິງ ແລະ ການສັບຊ້ອນແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນໃນສົກປີຮຽນ 2019-2020 ແມ່ນມີຄວາມສັບສົນໂດຍສະເພາະແມ່ນຕົວເລກຄະນະສຶກສາສາດທີ່ມີການແບ່ງປັນຕົວເລກຊໍ້າຊ້ອນ ແລະ ມີແຈ້ງການດັດແກ້ຫຼາຍຄັ້ງ;
- ວິຊາຄູຈິດຕະສຶກສາສາດ ໃນຄະນະສຶກສາສາດ ບໍ່ມີຄົນຢາກໄປຮຽນ ເນື່ອງຈາກຮຽນມາແລ້ວບໍ່ມີການບັນຈຸສັບຊ້ອນເປັນຄູ ແລະ ບໍ່ມີວິຊາສອນ;
- ນັກຮຽນສ່ວນໃຫຍ່ແມ່ນສະໝັກຮຽນແຕ່ລະດັບປະລິນຍາຕີ (ສາຂາວິຊາສະຖາປັດຕະຍະກຳສາດ, ຄອມພິວເຕີ, ເສດຖະສາດ ແລະ ບໍລິຫານທຸລະກິດ...), ສ່ວນລະດັບຊັ້ນສູງ ແລະ ຊັ້ນກາງ ນັກຮຽນບໍ່ຄ່ອຍສົນໃຈສະໝັກຮຽນຫຼາຍເທົ່າທີ່ຄວນ;
- ສະຖາບັນການສຶກສາຕ່າງໆປະກາດຜົນການສອບເສັງແລ້ວບໍ່ໄດ້ສົ່ງຜົນການສອບເສັງໃຫ້ແຂວງຮັບຊາບ ຈຶ່ງເຮັດໃຫ້ການສັບຊ້ອນ ມີການແບ່ງຊໍ້າກັບລາຍຊື່ຜູ້ທີ່ເສັງຕິດຢູ່ໃນແຕ່ລະສະຖາບັນ ເຮັດໃຫ້ມີການຄົ້ນຄ້ວາຄັດເລືອກຄືນໃໝ່ຫຼາຍຄັ້ງ;
- ການນຳສົ່ງນັກສຶກສາໃນແຜນຈຳນວນໜຶ່ງບໍ່ຖືກເງື່ອນໄຂຕາມແຈ້ງການແນະນຳຂອງລັດຖະມົນຕີ.

## II. ຂໍ້ສະເໜີທິດຊີ້ນຳສຳລັບການຈັດຕັ້ງປະຕິບັດສົກຮຽນ 2020-2021

ອີງໃສ່ນະໂຍບາຍການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ 20-80% ໃນແຜນຂັ້ນມະຫາວິທະຍາໄລ, ສະຖາບັນສ້າງຄູ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການແບ່ງປັນ 20% ມີຄຸນນະພາບດີຂຶ້ນກ່ວາເກົ່າ. ຮຽນສະເໜີຈັດຕັ້ງປະຕິບັດ ດັ່ງນີ້:

1. ຮັກສານະໂຍບາຍການຮັບຕົວເລກນັກຮຽນ-ນັກສຶກສາທີ່ໄດ້ເບ້ຍລ້ຽງຂອງລັດຖະບານ 20% ຂອງແຜນຮັບທັງໝົດໂດຍກຳນົດ 10% ແບ່ງໃຫ້ມະຫາວິທະຍາໄລ, ສະຖາບັນສ້າງຄູຄັດເລືອກຕາມຜົນການສອບເສັງ ແລະ 10% ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ຄັດເລືອກແບ່ງປັນໃຫ້ຕາມຜົນການຮຽນດີເດັ່ນ, ຜູ້ມີຜົນງານດີເດັ່ນ, ຜູ້ທຸກຍາກເພື່ອສົ່ງເສີມຜູ້ທີ່ມີຄວາມສາມາດ ແລະ ເນັ້ນຄຸນນະພາບຂອງການສຶກສາໃຫ້ຫຼາຍຂຶ້ນ;

2. ການປະກາດຜົນການສອບເສັງຂອງແຕ່ລະສະຖາບັນການສຶກສາໃຫ້ໄວກ່ວາເກົ່າ, ພ້ອມທັງແຈ້ງສົ່ງຜົນໃຫ້ແຂວງຮັບຊາບນຳໂດຍໄວ, ຜົນການສອບເສັງຄວນແຍກເປັນແຕ່ລະແຂວງ ເພື່ອຄວາມສະດວກໃນການເກັບກຳລາຍຊື່ນັກຮຽນ, ການຕິດຕາມ ແລະ ການສັງລວມຂອງແຂວງ ແລະ ສະຖາບັນເອງ;
3. ໃຫ້ສະຖາບັນການສຶກສາມີການຄົ້ນຄວ້າ, ວິເຄາະ-ວິໄຈ ແລະ ປັບປຸງ ຫຼື ເພີ່ມສາຂາວິຊາຮຽນໃຫ້ມີຄວາມຫຼາກຫຼາຍ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ກໍ່ຄືຂອງທ້ອງຖິ່ນ ແລະ ສົມຄູ່ກັບຄວາມຕ້ອງການຂອງຕະຫຼາດແຮງງານ ເພື່ອແກ້ໄຂການຮັບນັກຮຽນເກີນແຜນ ແລະ ລຸດແຜນຂອງສະຖາບັນການສຶກສາຕ່າງໆ;
4. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສ້າງແຜນຄວາມຕ້ອງການກໍ່ສ້າງຊັບພະຍາກອນມະນຸດປະຈຳປີຂອງຕົນສົ່ງໃຫ້ຫ້ອງການພັດທະນາຊັບພະຍາກອນມະນຸດ, ກົມແຜນການສັງລວມເພື່ອນຳສະເໜີຄະນະນຳກະຊວງສຶກສາທິການ ແລະ ກິລາ ແບ່ງປັນສັບຊ້ອນ;
5. ສຳລັບການແບ່ງປັນ ແລະ ກໍ່ສ້າງທຶນໃນແຜນ ແມ່ນໃຫ້ກົມແຜນການ ປະສານສົມທົບກັບສະຖາບັນການສຶກສາ ຄັດສົມການກໍ່ສ້າງໄປຕາມແຜນຄວາມຕ້ອງການຂອງຂະແໜງການ ແລະ ທ້ອງຖິ່ນ ໂດຍສະເລ່ຍໃນ 10% ທີ່ແບ່ງໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ຄັດເລືອກ;
6. ໃຫ້ກົມວິຊາການກ່ຽວຂ້ອງຄົ້ນຄ້ວາ ແລະ ປຶກສາຫາລື ກັນຄືນສຳລັບວິຊາໃດທີ່ເປັນຄ່ານິຍົມ ແລະ ຈ່າຍຄ່າຮຽນ 100% ຈະກຳນົດເພີ່ມ ແລະ ລຸດວິຊາໃດ ໃຫ້ແທດເໝາະກັບສະພາບຕົວຈິງໃນປະຈຸບັນ ແລະ ອານາຄົດ ແລ້ວນຳສະເໜີຄະນະນຳພິຈາລະນາ;
7. ເພື່ອສົ່ງເສີມການຮຽນສາຍອາຊີວະໃຫ້ຫຼາຍຂຶ້ນ ຄວນໃຫ້ມີຄູທີ່ປຶກສາຢູ່ໂຮງຮຽນມັດທະຍົມສະໜອງຂໍ້ມູນຂ່າວສານຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ມີການແນະແນວວິຊາຊີບໃຫ້ແກ່ນັກຮຽນໂດຍສະເພາະນັກຮຽນ ມ4 ແລະ ມ7 ໃຫ້ທົ່ວເຖິງ ໃນການເຂົ້າຮຽນສາຍອາຊີວະສຶກສາ ແລະ ສາຍສ້າງຄູ ໃນສາຂາທີ່ມີຄວາມຕ້ອງການໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນຕົນ ເພື່ອສົ່ງເສີມໃຫ້ຕົວເລກອາຊີວະສຶກສາ ປະຕິບັດໄດ້ຕາມແຜນການແບ່ງປັນສັບຊ້ອນ;
8. ສືບຕໍ່ເອົາຕົວເລກການແບ່ງປັນສັບຊ້ອນນັກຮຽນພິການ ທີ່ສູນຮຽນຮ່ວມສັບຊ້ອນແຕ່ລະສົກປີຮຽນ ເຂົ້າໃນແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານປະຈຳປີເພື່ອໃຫ້ຕົວເລກການກໍ່ສ້າງລວມສູນ ແລະ ສະດວກໃນການຈັດຕັ້ງປະຕິບັດ;
9. ການໄປຮຽນຕ່າງປະເທດຄວນມີການວາງເກນຄະແນນ, ມາດຖານ, ເງື່ອນໄຂ ແລະ ກຳນົດຂອບເຂດວິຊາທີ່ເປັນບູລິມະສິດ ສຳລັບການພັດທະນາທ້ອງຖິ່ນ ແລະ ໃຫ້ຂໍ້ມູນແກ່ຜູ້ຮຽນ ທີ່ຈະໄປຮຽນຕ່າງປະເທດດ້ວຍຮູບການຮ່ວມມືຕ່າງໆ;
10. ກົມແຜນການ ແລະ ກົມວິຊາການກ່ຽວຂ້ອງ ສືບຕໍ່ຄົ້ນຄ້ວາເອົາການກໍ່ສ້າງໃນລະດັບປະລິນຍາໂທເຂົ້າໃນແຜນແບ່ງປັນສັບຊ້ອນໃຫ້ພະນັກງານໄດ້ຍົກລະດັບ ເນື່ອງຈາກພະນັກງານສ່ວນຫຼາຍແມ່ນມີວຸດທິປະລິນຍາຕີແລ້ວ;
11. ສືບຕໍ່ສັງລວມຕົວເລກການກໍ່ສ້າງຂອງສະຖາບັນການສຶກສາ, ວິທະຍາໄລ ພາກເອກະຊົນເຂົ້າໃນແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນປະຈຳປີ.

III. <u>ວຽກຈຸດສຸມ ສຳລັບສົກປີ 2020-2021</u>

1. ຈັດກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນ ສົກຮຽນ 2019-2020 ແລະ ສ້າງແຜນ 2020-2021;

2. ສັງລວມແຜນຮັບນັກຮຽນ-ພະນັກງານຈາກສະຖາບັນຕ່າງໆເຂົ້າໃນແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກຮຽນ 2020-2021 ພາຍໃນເດືອນມີນາ 2020;
3. ທົບທວນ ແລະ ປັບປຸງລະບຽບການລວມກ່ຽວກັບມາດຖານ, ເງື່ອນໄຂ, ວິທີການຕ່າງໆໃນການຮັບນັກຮຽນ-ພະນັກງານ ເຂົ້າຮຽນຕໍ່ ພາຍໃນປະເທດພາຍໃນເດືອນ ມີນາ 2020;
4. ປະຊຸມຮ່ວມກັບກົມວິຊາການກ່ຽວຂ້ອງປຶກສາຫາລືກ່ຽວກັບການກຳນົດນະໂຍບາຍສຳລັບການແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກຮຽນ 2020-2021 ພາຍໃນເດືອນມີນາ 2020;
5. ແຈ້ງໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງກ່ຽວກັບນະໂຍບາຍສຳລັບການແບ່ງປັນສັບຊ້ອນນັກຮຽນ-ພະນັກງານຮຽນສຳລັບສົກຮຽນ 2020-2021 ພາຍໃນເດືອນເມສາ 2020;
6. ຈັດກອງປະຊຸມຮ່ວມກັບບັນດາກົມວິຊາການກ່ຽວຂ້ອງ ແລະ ສະຖາບັນການສຶກສາເພື່ອປຶກສາຫາລືປະກອບຄຳເຫັນ ແລະ ປັບປຸງແຜນໂຕເລກໃນທ້າຍເດືອນເມສາ 2020;
7. ນຳສະເໜີຄະນະນຳອະນຸມັດແຜນການແບ່ງປັນ, ຈັດພິມ ແລະ ແຈກຢາຍພ້ອມທັງແຈ້ງການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກປີຮຽນ 2020-2021 ໃນເດືອນພຶດສະພາ 2020.
8. ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກປີຮຽນ 2020-2021 ໃນໄລຍະເດືອນ ຕຸລາ 2020.

ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນສົກຮຽນ 2019-2020 ແລະ ສ້າງແຜນ 2020-2021 ຈະໄດ້ຈັດຂຶ້ນໃນວັນທີ 4-6 ມີນາ 2020 ຢູ່ບ້ານພັກແຄມງື່ມ (ທ່າລາດ), ເມືອງແກ້ວອຸດົມ, ແຂວງວຽງຈັນ. ສະນັ້ນ, ກົມແຜນການ ຈຶ່ງຂໍຖືເປັນກຽດຮຽນເຊີນທ່ານ ເປັນປະທານກອງປະຊຸມດັ່ງກ່າວນີ້ດ້ວຍ.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ຫົວໜ້າກົມ

ດອກແກ້ວ ພົມທະຈິດ